CHIAs

# ໜ້າວຽກ ແລະ ພາລະບົດບາດຂອງຜູ້ອຳນວຍຄວາມສະດວກຂັ້ນເມືອງ

## I. ກ່ຽວກັບສະມາຄົມ

ສະມາຄົມ ສຸຂະພາບຊຸມຊົນ ແລະ ການມີສ່ວນຮ່ວມ **ສສຮ** ແມ່ນອົງການຈັດຕັ້ງສັງຄົມລາວທີ່ເຮັດວຽກສົ່ງເສີມປະຊາກອນທີ່ມີຄວາມສ່ຽງ ແລະ ໄດ້ຮັບຜົນກະທົບໃນການເຂົ້າເຖິງການບໍລິການສຸຂະພາບຢ່າງທົ່ວເຖິງ ແລະ ເທົ່າທຽມ ລວມທັງການປົກປ້ອງທາງສັງຄົມ. ສສຮ ແມ່ນຜູ້ຮັບທຶນຍ່ອຍຂອງໂຄງການຕ້ານຕ້ານຕໍ່ຢາ Artemisinin ລະດັບພາກພື້ນ ທີ່ໄດ້ຮັບທຶນຈາກກອງທຶນໂລກຕ້ານເອດ. ວັນນະໂລກ ແລະ ໄຂ້ມາລາເລຍ, ເພື່ອປະຕິບັດວຽກງານກຳຈັດພະຍາດໄຂ້ມາລາເຣຍໃນ ສປປ ລາວ. ສສຮ ມີປີ 2024-2026 **ສສຮ** ຕ້ອງການຄູ່ຮ່ວມງານຕຳແໜ່ງ **ຜູ້ອຳນວຍຄວາມສະດວກຂັ້ນເມືອງ** ຈຳນວນ 13 ຄົນ ປະຈຳຢູ່ເມືອງເປົ້າໝາຍດັ່ງລຸ່ມນີ້:

1. **ເມືອງສາລະວັນ ຈຳນວນ 3 ຄົນ**
2. **ເມືອງວາປີ ຈຳນວນ 2 ຄົນ**
3. **ເມືອງຄົງເຊໂດນ ຈຳນວນ 2 ຄົນ**
4. **ເມືອງຕະໂອ້ຍ ຈຳນວນ 4 ຄົນ**
5. **ເມືອງສະໝ້ວຍ ຈຳນວນ 2 ຄົນ**

## II. ພາລະບົດບາດ / ຜົນໄດ້ຮັບທີ່ສຳຄັນທີ່ຄາດຫວັງ

**ສັງລວມໜ້າທີ່:**

1. ການຕິດຕາມຊຸກຍູ້ ການປະຕິບັດວຽກງານຂອງອາສາສະໝັກໄຂ້ມາລາເຣຍ ຂັ້ນບ້ານ;
2. ການເກັບກຳຂໍ້ມູນຈາກຮ້ານຂາຍຢາ (PPMs);
3. ການຕິດຕາມ ແລະ ລາຍງານ ການແຮສາງຂອງຢາປິ່ນປົວ ແລະ ເຄື່ອງກວດມາລາເຣຍ;
4. ອື່ນໆ.

**1. ການຕິດຕາມຊຸກຍູ້ການປະຕິບັດວຽກງານຂອງອາສາສະໝັກໄຂ້ມາລາເຣຍຂັ້ນບ້ານ:**

1. ຕິດຕາມຊຸກຍູ້ການປະຕິບັດວຽກງານຂອງອາສາສະໝັກໄຂ້ມາລາເຣຍຂັ້ນບ້ານ (VMWs) ພາຍໃນພື້ນທີ່ການຈັດຕັ້ງປະຕິບັດທີ່ຕົນຮັບຜິດຊອບ ເພື່ອຮັບປະກັນການໃຫ້ການບໍລິການໃຫ້ແກ່ປະຊາຊົນຢ່າງທົ່ວເຖິງ ຕາມເປົ້າໝາຍຂອງໂຄງການ;

2. ສະໜັບສະໜູນອາສາສະໝັກໄຂ້ມາລາເຣຍຂັ້ນບ້ານ (VMWs) ໃຫ້ບັນລຸຕົວຊີ້ວັດ, ສະໜັບສະໜູນຊຸກຍູ້ຜູ້ທີ່ປະຕິບັດຍັງບໍ່ທັນໄດ້ຕາມຄາດໝາຍຢ່າງຕໍ່ເນື່ອງ ພ້ອມທັງສ້າງຄວາມອາດສາມາດໃນການເຮັດວຽກ;
3. ຕິດຕາມ ແລະ ກວດກາຕົວຊີ້ວັດຂອງການປະຕິບັດວຽກງານຂອງ ອສບ ເຊັ່ນ ການກວດຫາເຊື້ອມາລາເຣຍ, ການປິ່ນປົວ, ການສິ່ງຕໍ່ Pv/Mix, ອສບ ເຮັດວຽກຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ, ລວມທັງລາຍງານໃຫ້ກັບໜ່ວຍງານໄຂ້ຍຸງຂັ້ນເມືອງ ແລະ ຜູ້ຮັບຜິດຊອບສາຍງານພາກສະໜາມຂັ້ນແຂວງ ແລະ ໜ່ວຍງານຕິດຕາມ ແລະ ປະເມີນຜົນ (M&E) ກ່ຽວກັບທຸກຕົວຊີ້ວັດຂອງໂຄງການໃນທ້າຍເດືອນ ແລະ ຢ່າງຕໍ່ເນື່ອງ;
4. ລາຍງານສິ່ງທ້າທາຍຂອງການຈັດຕັ້ງປະຕິບັດ ແລະ ຖອດຖອນບົດຮຽນຈາກ ອສບ ໃຫ້ກັບໜ່ວຍງານໄຂ້ຍຸງເມືອງ, ຜູ້ຮັບຜິດຊອບສາຍງານພາກສະໜາມຂັ້ນແຂວງ ແລະ ໜ່ວຍງານຕິດຕາມ ແລະ ປະເມີນຜົນ(M&E) ປະຈຳເດືອນ ແລະ ສະເໜີວິທີແກ້ໄຂ.

## 2. ການເກັບກຳຂໍ້ມູນຈາກ PPMs:

1. ເກັບກຳຂໍ້ມູນກວດເລືອດ, ການປິ່ນປົວ ແລະ ການສິ່ງຕໍ່ຄົນເຈັບມາລາເຣຍຈາກຮ້ານຂາຍຢາ (PPM) ພາຍໃນຂອບເຂດການຈັດຕັ້ງປະຕິບັດໃນແຕ່ລະທ້າຍເດືອນ ເພື່ອຮັບປະກັນການໃຫ້ການບໍລິການໃຫ້ແກ່ປະຊາຊົນຢ່າງທົ່ວເຖິງ ຕາມເປົ້າໝາຍຂອງໂຄງການ;
2. ຕິດຕາມ ແລະ ກວດກາຕົວຊີ້ວັດຂອງການປະຕິບັດວຽກງານຂອງຮ້ານຂາຍຢາ (PPM), PPM ເຮັດວຽກຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ, ລວມທັງລາຍງານໃຫ້ກັບໜ່ວຍງານໄຂ້ຍຸງຂັ້ນເມືອງ ແລະ ຜູ້ຮັບຜິດຊອບສາຍງານພາກສະໜາມຂັ້ນແຂວງ ແລະ ໜ່ວຍງານຕິດຕາມ ແລະ ປະເມີນຜົນ (M&E) ກ່ຽວກັບທຸກຕົວຊີ້ວັດຂອງໂຄງການໃນທ້າຍເດືອນ ແລະ ຢ່າງຕໍ່ເນື່ອງ;
3. ລາຍງານສິ່ງທ້າທາຍຂອງການຈັດຕັ້ງປະຕິບັດ ແລະ ຖອດຖອນບົດຮຽນຈາກ PPMs ໃຫ້ກັບໜ່ວຍງານໄຂ້ຍຸງເມືອງ, ຜູ້ຮັບຜິດຊອບສາຍງານພາກສະໜາມຂັ້ນແຂວງ ແລະ ໜ່ວຍງານຕິດຕາມ ແລະ ປະເມີນຜົນ (M&E) ປະຈຳເດືອນ ແລະ ສະເໜີວິທີແກ້ໄຂ.

## 3. ການຕິດຕາມ ແລະ ລາຍງານ ການແຮສາງຂອງຢາປິ່ນປົວ ແລະ ເຄື່ອງກວດມາລາເຣຍ:

1. ຕິດຕາມຢາແຮງສາງໃນຂັ້ນບ້ານ, PPMs ແລະ ໂຮງໝໍນ້ອຍ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ, ເພື່ອຮັບປະກັນວ່າຈຸດດັ່ງກ່າວມີຢາແຮສາງໃນລະດັບເກນຕ່ຳສຸດຕາມນະໂຍບາຍ ເພື່ອໃຫ້ການບໍລິການທີ່ທັນເວລາ, ລາຍງານບັນຫາອື່ນໆຕໍ່ກັບໜ່ວຍງານໄຂ້ຍຸງເມືອງ, ຜູ້ຮັບຜິດຊອບສາຍງານພາກສະໜາມ, ໜ່ວຍງານຕິດຕາມ-ປະເມີນຜົນ ແລະ ຕິດຕາມການແກ້ໄຂ;

2. ລົງຕິດຕາມກວດກາຢາແຮສາງປະຈຳເດືອນໃນຂັ້ນໂຮງໝໍນ້ອຍ ແລະ ຂັ້ນບ້ານ ເພື່ອຮັບປະກັນຢາ ແລະ ເຄື່ອງກວດພຽງພໍ ລວມທັງການເກັບຮັກສາຢາ ພ້ອມທັງລາຍງານສະພາບການຕໍ່ກັບຕໍ່ກັບໜ່ວຍງານໄຂ້ຍຸງເມືອງ, ຜູ້ຮັບຜິດຊອບສາຍງານພາກສະໜາມ, ໜ່ວຍງານຕິດຕາມ-ປະເມີນຜົນ ແລະ ຕິດຕາມການແກ້ໄຂ.

**4. ວຽກອື່ນໆ:**

1. ເຂົ້າຮ່ວມກິດຈະກຳການກຳຈັດພະຍາດໄຂ້ມາລາເຣຍເລັ່ງລັດທີ່ດຳເນີນຢູ່ໃນພື້ນທີ່ທີ່ຕົນຮັບຜິດຊອບ;
2. ເຂົ້າຮ່ວມການຝຶກອົບຮົມ ຫຼື ການຕິດຕາມໃນຂັ້ນບ້ານ ແລະ ໂຮງໝໍນ້ອຍ ຕາມແຜນຂອງຜູ້ບໍລິຫານໂຄງການ, ຫົວໜ້າສາຍງານ ແລະ ໜ່ວຍງານຕິດຕາມປະເມີນຜົນ;
3. ປະສານງານກັບຫ້ອງການສາທາລະນະສຸກເມືອງ, ໜ່ວຍງານໄຂ້ຍຸງເມືອງ, ໂຮງໝໍນ້ອຍ, ອຳນາດການປົກຄອງທ້ອງຖິ່ນ ແລະ ອສບ ເພື່ອຮັບປະກັນການຈັດຕັ້ງປະຕິບັດກິດຈະກຳໄປຕາມແຜນ.
4. ຊ່ວຍ ແລະ ປະກອບສ່ວນວຽກງານອື່ນໆຕາມການມອບໝາຍຂອງໜ່ວຍງານໄຂ້ຍຸງຂັ້ນເມືອງ, ແຂວງ, ສະມາຄົມ ແລະ ຜູ້ໃຫ້ທຶນ.

| **III. ເງື່ອນໄຂຜູ້ສະໝັກ** | |
|---|---|
| ການສຶກສາ ແລະ ປະສົບການ | • ລະດັບປະລິນຍາຕີ ຫລື ທຽບເທົ່າ ໃນສາຂາທີ່ກ່ຽວຂ້ອງ (ສຸຂະພາບ, ວິທະຍາສາດສັງຄົມ, ພະຍາບານ, ແລະອື່ນໆ)<br>• ມີປະສົບການໃນການຈັດຕັ້ງປະຕິບັດໂຄງການ ລວມທັງການວາງແຜນ, ງົບປະມານ ແລະ ການລາຍງານ<br>• ຄວາມເຂົ້າໃຈກ່ຽວກັບຍຸດທະສາດການກຳຈັດພະຍາດໄຂ້ມາລາເຣຍໃນ ສປປ ລາວ, ໂດຍສະເພາະກ່ຽວກັບອົງການຈັດຕັ້ງສັງຄົມລາວ (CSOs)<br>• ມີທັກສະດ້ານຄອມພິວເຕີດີໃນການນຳໃຊ້ Microsoft Office (Word, Excel, Power Point)<br>• ມີຄວາມຮູ້ດ້ານພາສາຊົນເຜົ່າ ຈະພິຈາລະນາເປັນພິເສດ |
| ດ້ານພຶດຕິກຳ | • ສາມາດເຮັດວຽກເປັນທີມ<br>• ຮັບປະກັນຄວາມປອດໄພສຳລັບເດັກນ້ອຍ, ເດັກຍິງ, ໄວໜຸ່ມ ແລະ ກຸ່ມເປົ້າໝາຍທຸກຄົນ |

| | |
|---|---|
| | • ສາມາດເດີນທາງໄປຕ່າງເມືອງ ແລະ ເຂດຫ່າງໄກໄດ້<br>• ເຂົ້າໃຈຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງຊຸມຊົນ<br>• ເປີດກວ້າງ ແລະ ຮັບຟັງຄວາມຄິດ/ທັດສະນະຄະຕິທີ່ແຕກຕ່າງ |